ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 397 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 19.3.2020

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ທົ່ວປະເທດ.

ເລື່ອງ: ທິດຊີ້ນຳກ່ຽວກັບການສະເຫຼີມສະຫຼອງບຸນປີໃໝ່ລາວ ປະຈຳປີ ພສ 2563.

- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ຄັ້ງວັນທີ 18 ມີນາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ຄັ້ງວັນທີ 18 ມີນາ 2020 ມາຍັງທ່ານ ຊາບ ດັ່ງນີ້:

1. ເນື່ອງຈາກບຸນປີໃໝ່ປະຈຳຊາດເຮົາປີນີ້ ແມ່ນກົງກັບ ວັນທີ 13, 14, 15, ແລະ 16 ເມສາ 2020. ສະນັ້ນ, ເພື່ອຮັບປະກັນ ຄວາມຕໍ່ເນື່ອງຂອງວຽກງານ ຈຶ່ງເຫັນດີໃຫ້ກຳນົດເອົາວັນທີ 11 ເມສາ 2020 (ກົງກັບວັນເສົາ) ເປັນມື້ເຮັດວຽກທາງລັດຖະການ ເພື່ອທົດແທນ ການພັກວຽກໃນວັນທີ 17 ເມສາ 2020 (ກົງກັບວັນສຸກ).

2. ເຫັນດີໃຫ້ໂຈະການຈັດກິດຈະກຳຈຳນວນໜຶ່ງ ໃນການສະເຫຼີມສະຫຼອງບຸນປີໃໝ່ລາວ ເປັນຕົ້ນ: ການຈັດງານປະກວດນາງສັງຂານ, ການຈັດງານຕະຫຼາດນັດມວນຊົນ, ການຫົດນ້ຳຕາມຖະໜົນຫົນທາງ, ການຕົບພະຊາຍ, ການແຫ່ວໍ່ທີ່ເປັນຂະບວນມວນຊົນ ແລະ ອື່ນໆ ທີ່ມີມວນຊົນເຂົ້າຮ່ວມຢ່າງຫຼວງຫຼາຍ ເພາະຈະມີຄວາມສ່ຽງ ແລະ ມີຄວາມຫຍຸ້ງຍາກໃນການປ້ອງກັນການລະບາດ ຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19). ການສະເຫຼີມສະຫຼອງບຸນປີໃໝ່ລາວປີນີ້ ແມ່ນໃຫ້ຈັດສະເພາະກິດຈະກຳທີ່ກ່ຽວພັນເຖິງຮີດຄອງປະເພນີອັນດີງາມ ຂອງຊາດເຮົາ ທີ່ມີມາແຕ່ດຶກດຳບັນເທົ່ານັ້ນ ເປັນຕົ້ນ: ການບາສີສູ່ຂວັນພາຍໃນຄອບຄົວ ແລະ ການນຳເອົາພະລົງເພື່ອຫົດສົງ ແຕ່ການເຂົ້າຫົດສົງໃນແຕ່ລະວັດນັ້ນ ຕ້ອງຈຳກັດຄົນບໍ່ໃຫ້ແອອັດຫຼາຍ ໂດຍໃຫ້ເຂົ້າຫົດສົງ ເປັນຈຸ ແຕ່ລະຈຸບໍ່ໃຫ້ເກີນ 40 ຄົນ ໂດຍມີເຈົ້າໜ້າທີ່ຄວບຄຸມປະຈຳຢູ່ແຕ່ລະວັດ. ການສະເຫຼີມສະຫຼອງປີໃໝ່ ຕ້ອງເນັ້ນຈິດໃຈການຍົກສູງສະຕິປ້ອງກັນພະຍາດລະບາດ ແລະ ປະຢັດມັດທະຍັດທີ່ສຸດ.

3. ມອບໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ຕໍ່ການລະບາດຂອງພະຍາດອັກເສບປອດຮຸນແຮງຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ອອກແຈ້ງການແນະນຳລະອຽດໃຫ້ທຸກພາກສ່ວນກ່ຽວຂ້ອງຮັບຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

3.1 ໃນໄລຍະພັກບຸນປີໃໝ່ລາວປີນີ້, ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ແຈ້ງໃຫ້ພະນັກງານ, ທະຫານ-ຕຳຫຼວດ, ຜູ້ປະກອບການ ແລະ ປະຊາຊົນ ຢຸດການເດີນທາງໄປທ່ອງທ່ຽວຢູ່ຕ່າງປະເທດ ໂດຍສະເພາະບັນດາປະເທດ ທີ່ມີການລະບາດ ຂອງ COVID-19, ຖ້າບໍ່ຈຳເປັນແທ້ໆ ໃນໄລຍະນີ້ ແມ່ນບໍ່ໃຫ້ເດີນທາງໄປຕ່າງປະເທດ ຍົກເວັ້ນການໄປວຽກທາງການ ທີ່ສອງຝ່າຍໄດ້ຕົກລົງກັນ ແລະ ບໍ່ສາມາດເລື່ອນ ຫຼື ຍົກເລີກໄດ້ ແລະ ການໄປປິ່ນປົວ ຫຼື ໄປກວດສຸຂະພາບ ຕາມການນັດໝາຍຂອງແພດ ແຕ່ກໍຕ້ອງປະຕິບັດຕາມມາດຕະການເຝົ້າລະວັງ ແລະ ປ້ອງກັນການຕິດເຊື້ອ ຕາມການແນະນຳຂອງປະເທດເຈົ້າພາບ ແລະ ໜັງສືແນະນຳຂອງຄະນະ

ສະເພາະກິດ ສະບັບເລກທີ 012/ສພກ, ລົງວັນທີ 16 ມີນາ 2020 ຢ່າງເຂັ້ມງວດ, ໂດຍສະເພາະການປ້ອງກັນຕົນເອງບໍ່ໃຫ້ຕິດເຊື້ອ ແລ້ວນຳມາແຜ່ລະບາດໃນປະເທດຂອງພວກເຮົາ. ໃນກໍລະນີ ທີ່ມີບຸກຄົນໃດຫາກໄດ້ເດີນທາງກັບຈາກປະເທດທີ່ມີການແຜ່ລະບາດ ຂອງ COVID-19 ກໍໃຫ້ປະຕິບັດການແຍກປ່ຽວຕົນເອງຢ່າງໜ້ອຍ 14 ວັນ ແລະ ຕິດຕາມສຸຂະພາບຂອງຕົນ ດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງ, ກໍລະນີມີອາການໄຂ້, ໄອ, ຫາຍໃຈຍາກ ໃຫ້ຕິດຕໍ່ສາຍດ່ວນ 166 ຫຼື 020-54066777 ເພື່ອຂໍຄຳແນະນຳສິ່ງທີ່ຄວນປະຕິບັດໃນຂັ້ນຕໍ່ໄປ (ລາຍລະອຽດ ໄດ້ກຳນົດໄວ້ໃນໜັງສືແຈ້ງການຂອງຄະນະສະເພາະກິດ ສະບັບເລກທີ 012/ສພກ, ລົງວັນທີ 16 ມີນາ 2020).

3.2 ໃຫ້ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ແຈ້ງໃຫ້ບັນດາເມືອງ ແລະ ອຳນາດການປົກຄອງບ້ານ ເພື່ອແຈ້ງໃຫ້ຜູ້ປົກຄອງ ຂອງແຮງງານລາວ ທີ່ໄປອອກແຮງງານຢູ່ຕ່າງປະເທດ ໂດຍສະເພາະປະເທດໃກ້ຄຽງ ທີ່ມີການລະບາດຂອງ COVID-19, ຖ້າຜູ້ອອກແຮງງານເຫຼົ່ານັ້ນ ມີຄວາມປະສົງຢາກກັບບ້ານ ມາຢ້ຽມຢາມຄອບຄົວໃນໄລຍະພັກບຸນປີໃໝ່ລາວນີ້ ກໍໃຫ້ເຂົາເຈົ້າປະຕິບັດຕາມມາດຕະການເຝົ້າລະວັງ ແລະ ປ້ອງກັນການຕິດເຊື້ອ ຕາມການແນະນຳຂອງຄະນະສະເພາະກິດຄວບຄຸມ ແລະ ຕອບໂຕ້ ການລະບາດຂອງພະຍາດ COVID-19 ຢ່າງເຄັ່ງຄັດ. ພ້ອມກັນນັ້ນ ກໍໃຫ້ແຮງງານທີ່ຈະເດີນທາງກັບມານັ້ນ ກະກຽມຜ້າອັດປາກ, ນ້ຳຢາລ້າງມື ແລະ ອຸປະກອນຕ່າງໆທີ່ຈຳເປັນມານຳ.

4. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ນະຄອນຫຼວງວຽງຈັນ ແລະບັນດາແຂວງ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຊີ້ນຳ ການຜະລິດສະບຽງອາຫານ, ການສະໜອງເຄື່ອງອຸປະໂພກ ແລະບໍລິໂພກ ໃຫ້ພຽງພໍກັບຄວາມຕ້ອງການ ຂອງສັງຄົມ, ລວມທັງການຕິດຕາມ, ກວດກາ ແລະ ຄຸ້ມຄອງລາຄາສິນຄ້າ ໃນທ້ອງຕະຫຼາດ ເພື່ອບໍ່ໃຫ້ມີການສວຍໂອກາດຂຶ້ນລາຄາ, ກັກຕຸນສິນຄ້າ ແລະ ສະບຽງອາຫານ.

5. ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພີ່ມທະວີການໂຄສະນາ ແລະ ເຜີຍແຜ່ຜ່ານສື່ຕ່າງໆ ໃຫ້ພະນັກງານ, ທະຫານ-ຕຳຫຼວດ, ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ ກ່ຽວກັບຈິດໃຈຊີ້ນຳຂອງລັດຖະບານ ໃນການຈັດຕັ້ງການສະເຫຼີມສະຫຼອງບຸນປີໃໝ່ລາວໃນປີນີ້.

6. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເອົາໃຈໃສ່ຮັກສາຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ໂດຍໃຫ້ມີການແບ່ງຄວາມຮັບຜິດຊອບໃນການຕິດຕາມ, ກວດກາເວນຍາມ ແລະ ປະຈຳການ ເພື່ອປ້ອງກັນສຳນັກງານອົງການ ຕະຫຼອດໄລຍະພັກບຸນປີໃໝ່ລາວ ແລະ ໃຫ້ສາມາດປະສານງານໄດ້ເປັນປົກກະຕິ ແລະ ຮັບປະກັນຄວາມປອດໄພໃນທຸກດ້ານ.

7. ມອບໃຫ້ອຳນາດການປົກຄອງທ້ອງຖິ່ນ ໂດຍສະເພາະ ເມືອງ, ບ້ານ ແລະ ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ເປັນເຈົ້າການ ໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆ ທີ່ລັດຖະບານ ໄດ້ປະກາດຫ້າມຕາມເນື້ອໃນແຈ້ງການສະບັບນີ້, ຖ້າມີຜູ້ລະເມີດກໍ່ໃຫ້ດຳເນີນການ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ. |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ. |
| 3. ອົງການແນວລາວສ້າງຊາດ | 01 ສະບັບ. |
| 4. ບັນດາອົງການຈັດຕັ້ງພັກ, ບ່ອນລະ | 01 ສະບັບ. |
| 5. ບັນດາອົງການຈັດຕັ້ງມະຫາຊົນ, ບ່ອນລະ | 01 ສະບັບ. |
| 6. ສຳເນົາ | 01 ສະບັບ. |